**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 13-ກັນຍາ 2009 (09-13-2009)**

---

## **ຄົນທີ່ພຣະເຢຊູຊົງຮູ້ຈັກ:**

**ຂໍ້ພຣະຄັມພີໃນບົດຮຽນ**: (ມາຣະໂກ 2:3-12, 15-17, 23-28)

### **ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:**

ທ່ານມາຣະໂກໄດ້ສະແດງໃຫ້ເຫັນເຖິງຊີວິດຂອງພຣະເຢຊູທີ່ໄດ້ສຳຜັດແຕະຕ້ອງກັບຝູງຊົນຫລາຍປະເພດ. ພຣະເຢຊູໄດ້ປິ່ນປົວຄົນເຈັບໃຫ້ຫາຍດີ, ໄດ້ຊອກຫາຄົນບາບ, ແລະປະເຊີນໜ້າກັບພວກເຄັ່ງສາສນາ.

### **ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:**

ເພາະຫລາຍຄັ້ງທີ່ພວກຄຣິສຕຽນມັກຈະຫລີກເວັ້ນຈາກການສົນທະນາກັບພວກຄົນທີ່ແຕກຕ່າງຈາກພວກເຂົາ. ມີພວກທີ່ບໍ່ເຊື່ອຫລາຍທໍ່ໃດທີ່ພວກຄຣິສຕຽນຮູ້ຈັກ? ບົດຮຽນນີ້ຈະສະແດງໃຫ້ເຫັນວ່າ ພຣະເຢຊູໄດ້ສົນທະນາກັບຝູງຊົນຊຶ່ງນຳຄວາມສົນໃຈດູດດຶງເອົາແມ້ກະທັ້ງຜູ້ນຳສາສນາທີ່ຕິຕຽນ, ບໍ່ເຫັນພ້ອມກັບພຣະອົງ. ພຣະອົງໄດ້ສຳແດງຄວາມສົງສານ ແລະໄດ້ແນະນຳຄົນທັງຫລາຍໃຫ້ເຫັນເຖິງເປົ້າໝາຍອັນແທ້ຈິງຂອງພຣະອົງໃນຖານະພຣະອົງເປັນພຣະບຸດຂອງພຣະເຈົ້າ.

### **ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:**

ບົດຮຽນນີ້ ຈະທ້າທາຍທ່ານໃຫ້ມີຄວາມສົນໃຈສົນທະນາກັບຄົນອື່ນໆ ທີ່ມີຄຸນນະສົມບັດທີ່ຄ້ານຄືກັບພຣະຄຣິດ.

### **ການຈັດຕຽມ ແລະແຜນການສອນຂອງຄຣູ:**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

### **ແນະນຳ:**

- **ທ່ານຮູ້ຈັກໃຜ?** ຖາມນັກຮຽນໃຫ້ພັລນາເຖິງລັກສະນະຂອງຄົນໃດຄົນນຶ່ງທີ່ເຂົາເຈົ້າມັກໃຊ້ເວລານຳຫລາຍທີ່ສຸດນັ້ນເປັນແນວໃດ.
- ໃຊ້ເວລາກັບຄົນທີ່ມີໃຈຄອນແຄນຢ່າງເປັນກັນເອງ. ມື້ນີ້ໃຫ້ນຳພານັກຮຽນຈົດຈໍ່ໃສ່ໃນການຮູ້ຈັກກັບພຣະເຢຊູ
- ແນະນຳສັ້ນໆວ່າ ພຣະເຢຊູໄດ້ຊົງໃຊ້ເວລາກັບຄົນຫລາຍປະເພດ. ນຳການອະທິຖານ, ທູນຂໍຈາກພຣະເຈົ້າ, ທ້າທາຍກັບນັກຮຽນທຸກຄົນໃຫ້ທຸກຄົນເອົາໃຈຈົດຈໍ່ໃສ່ໃນກິຣິຍາທ່າທີຂອງພຣະເຢຊູຄຣິດ.

1. <u>**ເປັນຜູ້ທີ່ຮັບໃຊ້ຕໍ່ຜູ້ທີ່ກຳລັງມີຄວາມເຈັບປວດ:**</u> (ມາຣະໂກ 2:3-12)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ມາຣະໂກ 2:3-12
- ໃຫ້ເຂົາເຈົ້າເລົ່າເຖິງເຣື່ອງນີ້ໃຫ້ແກ່ກຸ່ມພວກເດັກນ້ອຍຟັງ.
- ຂໍໃຫ້ນັກຮຽນເລົ່າເຣື່ອງນີ້ຈັກສອງສາມຄົນໂດຍໃຫ້ຕີຄວາມໝາຍຂອງຄົນເປັ້ຽ ແລະຄົນທີ່ນຳຄົນເປັ້ຽໄປ.
- ໃຫ້ເນັ້ນເຖິງການທີ່ພຣະເຢຊູຊົງຊ່ອຍຄົນຜູ້ທີ່ມີຄວາມຕ້ອງການທັງຫລາຍ, ແລະໃຫ້ພວກເຮົາມີຄວາມເຊື່ອໃນພຣະຄຣິດ.
- ນາມຊື່ໃດທີ່ພຣະເຢຊູໄດ້ຊົງໃຊ້ສຳລັບພຣະອົງເອງໃນພຣະທັມມາຣະໂກ 2:10?

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> (ມາຣະໂກ 2:3-12)

1. ທ່ານກໍແມ່ນຜູ້ນຶ່ງບໍ່ທີ່ແນະນຳຊ່ອຍເຫລືອຄົນອື່ນໆ ແລະສົ່ງເງິນໄປຊ່ອຍເຫລືອບາງຄົນ? ເພາະດ້ວຍເຫດໃດ?
2. ໃນສາມເດືອນທີ່ຜ່ານມາໃນຫ້ອງຮຽນຂອງທ່ານແມ່ນໃຜແດ່ທີ່ທ່ານໄດ້ຊ່ອຍເຫລືອ?
3. ໃນການແນະນຳຊ່ອຍເຫລືອຂອງທ່ານນັ້ນມີຫຍັງເກີດຂຶ້ນແດ່?
4. ຫລາຍຄັ້ງທີ່ທ່ານໄດ້ປະຕິເສດໃນການຊ່ອຍເຫລືອຈົນກວ່າທ່ານມີເວລາທີ່ສະດວກ, ຊອກຫາຄົນອື່ນໃຫ້ໄປຊ່ອຍແທນທ່ານ, ຫລືເຊົາຊ່ອຍເຫລືອໄປເລີຍບໍ່?

**2. <u>ຊອກຫາຄົນບາບ:</u>** (ມາຣະໂກ 2:15-17)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ ມາຣະໂກ 2:15-17
- ຂີດວົງກົມອ້ອມຄຳວ່າ *ຊອກຫາ* ແລ້ວໃຫ້ນັກຮຽນບອກຄຳອື່ນ ທີ່ມີຄວາມໝາຍມາປຽບທຽບຂອງຄຳວ່າ *ຊອກຫາ.* ບອກນັກຮຽນວ່າ ຊຶ່ງພຣະເຢຊູບໍ່ພຽງຮູ້ຈັກຜູ້ທີ່ຫາກໍໄດ້ຮັບຄວາມເຈັບປວດໃໝ່ເທົ່ານັ້ນ, ແຕ່ພຣະຊົງຮູ້ຈັກຄົນບາບທັງຫລາຍ- ພຣະອົງຊົງມີເຈຕນາໃຊ້ເວລາກັບເຂົາ.
- ພຣະເຢຊູຊົງຄົບຫາສະມາຄົມກັບຄົນທີ່ເຄັ່ງສາສນາ ຄົນທີ່ມີອຳນາດ ໃຫ້ຄວາມສົນພຣະທັຍຕໍ່ຄົນທີ່ເຂົາວ່າເຂົາບໍ່ມີຄວາມຕ້ອງການ. ຜູ້ທີ່ເຊື່ອທັງຫລາຍຄວນເສີມສ້າງສາຍສັມພັນກັບຄົນທີ່ບໍ່ເຊື່ອດ້ວຍ, ແມ້ນທັ້ງຄົນທີ່ມີຄວາມສົນໃຈ ຫລືຄົນທີ່ເຂົາວ່າເຂົາບໍ່ຕ້ອງການ ຫລືຜູ້ທີ່ແຍກຕົວອອກໄປດ້ວຍ.
- ໃຫ້ຜູ້ນຶ່ງອາສາສມັກອ່ານພຣະທັມມາຣະໂກ 2:15-17. ເພື່ອໃຫ້ໄດ້ຄວາມກະຈ່າງແຈ້ງໃນການສຳແດງຂອງພຣະເຢຊູທີ່ໄດ້ຊົງຮັບປະທານອາຫານຮ່ວມກັບຄົນເກັບພາສີ.
- ທ່ານໄດ້ທຳເໝືອນພຣະເຢຊູຫລາຍ? ຫລືທຳເໝືອນພວກຟາຣີຊາຍຫລາຍ?

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> ມາຣະໂກ 2:15-17

1. ບາງສິ່ງບາງຢ່າງທີ່ບັນດາຜູ້ທີ່ເຊື່ອໄດ້ແກ້ຕົວ ຫລືຫລີກເວັ້ນຕໍ່ການຕິດຕໍ່ກັບຜູ້ທີ່ບໍ່ແມ່ນຄຣິສຕຽນ ຜູ້ທີ່ຕໍ່ຕ້ານສະມາຊິກຫລາຍໆໂບດນັ້ນມີຫຍັງແດ່?
2. ເທິງຕາຊັ່ງນໍ້າໜັກ 1-10 (1 ເປັນຕົວເລກທີ່ຕໍ່າ), ທ່ານຈະເຮັດໃຫ້ການສຶກສາພຣະຄັມພີໃນຫ້ອງຮຽນມີທັສນະທ່າທາງດີທີ່ສຸດໄດ້ແນວໃດ?
3. ໃຊ້ຕາຊັ່ງອັນດຽວກັນ, ຄວາມຕັ້ງໃຈຂອງທ່ານໃນການຊອກຫາຄົນຜິດບາບຢູ່ໃນຣະດັບໃດ?

3 . **ປະເຊີນໜ້າກັບພວກເຄັ່ງສາສນາ:** (ມາຣະໂກ 2:23-28)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມາຣະໂກ 2:23-28
- ການເນັ້ນໜັກຊຶ່ງທ່ານມາຣະໂກໄດ້ສະແດງໃຫ້ເຫັນເຖິງພຣະເຢຊູຊົງໄດ້ປຽບພວກຜູ້ນຳສາສນາແນວໃດ ໃນເມື່ອເຂົາເຂົ້າມາຫາພຣະອົງຊຶ່ງບໍ່ສອດຄ້ອງກັບສາສນາຂອງເຂົາ. ພຣະເຢຊູຊົງສັ່ງສອນເຂົາເຣື່ອງຂ່າວປະເສີດຂອງພຣະອົງຊຶ່ງບໍ່ແມ່ນການຢັບຢັ້ງຮີດຄອງປະເພນີອັນເກົ່າແກ່.
- "ເພງທີ່ຊື່ວ່າ "ມີໃຜໄດ້ຍິນສຽງນາງບໍ່" ບອກເຖິງເຣື່ອງຂອງຜູ້ຍິງຄົນນຶ່ງຜູ້ທີ່ມີຊີວິດຢູ່ພາຍໃຕ້ເງົາຫໍລະຄັງໂບດແຫ່ງນຶ່ງ. ເພງນັ້ນໄດ້ຮ້ອງຖາມໂບດ, ມີໃຜໄດ້ເຫັນນາງບໍ່?
- ແມ່ນໃຜທີ່ຢູ່ໃຕ້ເງົາຫໍລະຄັງໂບດທີ່ພວກເຮົາບໍ່ເຫັນແລະບໍ່ໄດ້ຍິນສຽງ?
- ພຣະເຢຊູບໍ່ໄດ້ເຫັນພຽງແຕ່ຄົນເໝືອນຜູ້ຍິງຄົນນີ້, ແຕ່ພຣະອົງຊົງສ່ອງເຫັນເຂົາທຸກຄົນ ແລະຊົງໃຊ້ເວລາຢູ່ກັບເຂົາ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ມາຣະໂກ 2:23-28

1. ທ່ານຈະໃຊ້ເຣື່ອງການສຶກສານີ້ນີ້ເພື່ອຕອບສນອງຕໍ່ຜູ້ທີ່ມີຄວາມໂສກເສົ້າ, ຄົນໜຸ່ມສາວວັຍຄະນອງທີ່ນຸ່ງສົ້ງເສື້ອຂາດໃນໂຮງຮຽນວັນອາທິດແນວໃດ?
2. ແມ່ນອັນໃດທີ່ເປັນປະເດັນສຳຄັນທີ່ເຮັດໃຫ້ທ່ານນຳພາພວກເຄັ່ງສາສນາໃນໂບດຂອງທ່ານໄດ້?
3. ທ່ານຈະຕັດສິນໃຈໃນເມື່ອບາງສິ່ງທີ່ບໍ່ເປັນການດີຕໍ່ການປະເຊີນໜ້າແນວໃດ?

**ພຣະຄັມພີແຫ່ງຄວາມຈິງ**

- ພຣະເຢຊູຄຣິດໄດ້ຊົງເຫັນຄົນທຸກປະເພດໃນອ້ອມຂ້າງພຣະອົງ.
- ພຣະເຢຊູຊົງຊ່ອຍເຫລືອຜູ້ທີ່ມີຄວາມເຈັບປວດ.
- ພຣະເຢຊູຊົງຮັກຜູ້ທີ່ຕົກຢູ່ໃນຄວາມຜິດບາບ.
- ພຣະເຢຊູໄດ້ຊົງປະເຊີນໜ້າກັບຜູ້ທີ່ຕົກຢູ່ໃນຄວາມມືດມົນ ຜູ້ທີ່ຖືວ່າເຂົາເອງເປັນຄົນຊອບທັມ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**